## ສິ່ງໃດຄືອຸບາກິດຂອງປະຊາຊົນແລະຂອງພວກເຮົາຊາວລັດ .

ປັດຈຸບັນນີ້ຫລາຍຄົນຄົງຄິດວ່າອີກບໍ່ນານເຮົາຄົງຈະມີຄວາມສຸຂສວ່າງແລະສະບາຍໃຈ ໂດຍບໍ່ມີສິ່ງໃດມາຂັດຂວາງຈິດໃຈຕໍ່ໄປ, ແຕ່ວ່າໃຫ້ຫລາຍຄົນເຂົ້າໃຈວ່າວຽກງານຂອງເຮົາຍັງຈະຕ້ອງດຳເນີນຕໍ່ໄປນານກວ່າເດີມ. ເຖິງວ່າອານາຄົດຂອງເຮົາຈະສຸຂສວ່າງກໍຕ້ອງໃຊ້ເວລານານແລະນານ.

ພວກເຮົາເປັນນັກຕໍ່ສູ້ຈະບໍ່ມີວັນຢຸດພັກ ແມ້ແຕ່ການຢຸດຍິງໄດ້ສິ້ນສຸດລົງແລ້ວກໍຕາມແຕ່ຈະໃຫ້ເຮົາຢຸດການຕໍ່ສູ້ກໍເມື່ອປະຊາຊົນຊາວລາວຫລາຍຄົນຍອມນັບຖືສິດທິແຕ່ງບ້ານເຮືອນຂອງເຮົາພ້ອມທັງມັດເດັ່ງຣະສານເຊື້ອງປຸກຂອງຝັງ ໂຮມທັງພື້ນແຜ່ນດິນແລະປະຊາຊົນຂອງເຮົາເທົ່ານັ້ນ .

ປັດຈຸບັນນີ້ເຮົາມີກຳລັງເພີ່ມຕື່ມຫລາຍເພື່ອການຕໍ່ສູ້ອັນຍາວນານແລະເພື່ອການຢູ່ອ່ອນຂອງເຮົາ ເຮົາມີຄວາມແຂງແຮງແລະກຳລັງເຂັ້ມແຂງຍິ່ງຂຶ້ນໄປອີກ ຫລາຍວັນນີ້ສັດຕູຍັງຂ້ານເກັ່ງບໍ່ກ້າອອກຈາກທີ່ພັກໃນເວລາກາງຄືນເນື່ອງຈາກຢ້ານເຂົາຢ້ານວ່າພວກເຮົາຈະເຂົ້າໂຈມຕີ .

ຄວາມແຂງແຮງທີ່ເຮົາມີຢູ່ທຳໃຫ້ຝ່າຍສັດຕູຕ້ອງການທີ່ຈະສູ້ຣົບກັບພວກເຮົານັ້ນລົງຫລາຍເທື່ອ, ໃກ້ຄຽງກັບເຂດແດນຂອງແກວວຽດນາມທີ່ຊຽງຂວາງ, ທົ່ງໄຫຫີນ, ປະຊາຊົນໄດ້ອົບພະຍົບລີ້ພັຍອອກມາຈາກການປົກຄອງຂອງສັດຕູມາຫາຝ່າຍເຮົາເປັນຈຳນວນມາກມາຍແລະເພີ່ມຕື່ມຂຶ້ນຫລາຍວັນ ດ້ວຍເຫດໃດຈຶ່ງເປັນເຊັ່ນນັ້ນ ✓

ຄຳຕອບງ່າຍໆກໍຄືສັດຕູໄດ້ກົດຂີ່ຂົ່ມເຫັງກັບຄົນເຫຼົ່ານັ້ນຢ່າງຮ້າຍແຮງ, ເຜົາບ້ານເຮືອນຂອງປະຊາຊົນ, ປຸ້ນເອົາເງິນຄຳແລະເຂົ້າປາອາຫານຂອງເຂົາທີ່ບໍ່ມີຄວາມຜິດ ຊ້ຳຮ້າຍມັນຍັງຂັບໄລ່ໃຫ້ອອກໄປຈາກບ້ານບ່ອນທີ່ຢູ່ອັນຊອບທັມຂອງເຂົາເຫຼົ່ານັ້ນອີກດ້ວຍ ແຕ່ຝ່າຍເຮົາກໍຍັງມີບ່ອນຢູ່ພຽງພໍສຳຫລັບຄົນທີ່ໄດ້ຮັບເຄາະຮ້າຍເຫຼົ່ານັ້ນທີ່ຈະມາຢູ່ອ່ອນນຳເຮົາ ເຮົາມີເຂົ້າເກືອພຽງພໍໃຫ້ກິນ ມີງານໃຫ້ເຮັດ ມີອາວຸດໃຫ້ປ້ອງກັນຕົວ ຫລາຍຄົນສາມາດມາໃຫ້ການຊ່ວຍເຫຼືອກັນໄດ້ແມ້ແຕ່ພວກເດັກນ້ອຍຫລືແມ່ເຖົ້າກໍສາມາດຈັບອາວຸດຍິງຂຶ້ນສູ້ສັດຕູໄດ້ ຍັງມີໄຮ່ນາອີກມາກທີ່ຈະໃຫ້ເຂົາເຮັດຢູ່ກິນມີແກ່ນພືດທີ່ຈະໃຫ້ເອົາໄປປູກ ມີບ່ອນທີ່ຈະເຮັດບ້ານເຮືອນຂຶ້ນໃໝ່ ການຕໍ່ສູ້ແນວນີ້ພວກເຮົາຊາວລົດທັງຫລາຍຈະຕ້ອງເປັນກຳລັງສຳຄັນອັນນຶ່ງ ສແດງນຳໃຫ້ປະຊາຊົນເຫັນຄວາມສາມາດຂອງພວກເຮົາ ພວກເຮົາຈະຕ້ອງໃຫ້ການຊ່ວຍເຫຼືອຕໍ່ປະຊາຊົນ ພວກເຮົາມີງານອີກມາກທີ່ຈະຕ້ອງຊີ້ແຈງແນະນຳໃຫ້ພໍ່ແມ່ພີ່ນ້ອງຂອງເຮົາຮູ້ວ່າອັດທິຄອມມຸຍນິສຈະນຳມາໃຊ້ກັບພວກເຮົາບໍ່ໄດ້ ຢ່າງນີ້ແມ່ນເປັນການຕໍ່ສູ້ແນວນຶ່ງຂອງພວກເຮົາເພາະເຮົາຈຳເປັນທີ່ຈະຕ້ອງຮັກສາສິດທິເສຣີພາບທີ່ເຮົາເຄີຍມີຢູ່ກິນດີແລະຄວາມສຸຂສະບາຍ ແນ່ນອນວ່າມີຄອມມຸຍນິສເຂົ້າມາປົກຄອງເຮົາອ້ອມທ້ອງພໍ່ແມ່ຂອງເຮົາຈະມີຄວາມທຸກຍາກອີກຫລາຍ ຖ້າພວກເຮົາບໍ່ຊ່ວຍເຫຼືອແນະນຳພີ່ນ້ອງຂອງເຮົາອີກສອງສາມປີຂ້າງໜ້າເຮົາກໍຈະລຳບາກ ແມ້ວ່າເຮົາຈະມີຄວາມເຂັ້ມແຂງຕື່ມຂຶ້ນສັດຕູມີຄວາມຢ້ານກົວກຳລັງຂອງພວກເຮົາ

ເຮົາຈະຕ້ອງບໍ່ປະມາດ ຢ່າລືມວ່າຝ່າຍສັດຕູມີກຳລັງມາກມາຍ ມີອາວຸດຫລາຍແນວ ມີຄົນໂຄສະນາຫລອກລວງປະຊາຊົນຢູ່ຫລາຍມີວິທີການໂຄສະນາຂອງຝ່າຍສັດຕູ ຫລາຍນີ້ທຳໃຫ້ຄົນທີ່ບໍ່ຮູ້ຄວາມຈິງຫລົງເຊື່ອແມ້ແຕ່ທະຫານຂອງເຮົາກໍຕ້ອງທຳການສູ້ຣົບດ້ວຍຄວາມເກັ່ງກ້າວຄຳສັ່ງ ຫາກທະຫານບໍ່ທຳຕາມຄຳສັ່ງຂອງນາຍເຂົາກໍຈະຖືກນຳໄປຂ້າຖິ້ມເສັຽ ພໍ່ເຮົາຮູ້ວ່າຝ່າຍສັດຕູທຳງານຫລາຍແຕ່ມີເຂົ້າກິນບໍ່ພຽງພໍ ມີພໍກິນເພື່ອໃຫ້ມີຊີວິດຢູ່ເທົ່ານັ້ນ ເຮົາຈຶ່ງຮູ້ວ່າສັດຕູຕ້ອງການຫັຍງ ສັດຕູມີຄວາມຄິດທີ່ຈະເອົາໄຮ່ນາຂອງເຮົາແລະສັດກາງບ້ານທັງເຊື້ອງປຸກຂອງຝັງເພື່ອສັດຕູຈະໄດ້ນຳໄປໃຫ້ຄົນຂອງເຂົາທີ່ອຶດຢາກຍາກຈົນ .

ເມື່ອເຮົາຮູ້ວ່າສັດຕູຕ້ອງການຫັຍງ ເຮົາຮວມທັງປະຊາຊົນທົ່ວປະເທດບໍ່ມັກໃຫ້ບ້ານເຮືອນແລະພື້ນແຜ່ນດິນຮວມທັງພີ່ນ້ອງແລະຊາດຂອງເຮົາຖືກພວກຄອມມຸຍນິສ ຄະນະປະເທດລາວແລະແກວວຽດນາມເອົາໄປເປັນຂອງເຂົາ ເຮົາຊາວລົດຫລາຍຄົນຍ່ອມມີຄວາມຄິດທີ່ຈະປ້ອງກັນປະເທດຊາດຂອງເຮົາໆຕ້ອງຕໍ່ສູ້ໃກ້ຊິດກັບປະຊາຊົນຊາວລາວຫລາຍຄົນ ບໍ່ແມ່ນສະເພາະປະຊາຊົນຊາວລາວສູງ, ລາວເທິງ, ຢ້າວ, ໄທ ຄົນຫລາຍຄົນສາມາດຊ່ວຍກັນໄດ້ເຮົາຕ້ອງຮວມກັນຕໍ່ສູ້ສັດຕູເພື່ອຣັຖບານຂອງເຮົາ ແລະເຮົາຍັງມີປະເທດເພື່ອນບ້ານໃຫ້ການຊ່ວຍເຫຼືອ ເຮົາຄົງຈຳໄດ້ວ່າ ເມື່ອສັດຕູທຳການລຸກລານເອົາທົ່ງໄຫຫີນແລະຊຽງຂວາງນັ້ນຣັຖບານຂອງເຮົາໄດ້ຮັບຄວາມຊ່ວຍເຫຼືອຈາກປະເທດເພື່ອນບ້ານເອົາອາວຸດກະສຸນມາໃຫ້ເຮົາໃຊ້ປ້ອງກັນຕົວລູກເມັຽແລະພໍ່ແມ່ພີ່ນ້ອງຂອງເຮົາ ທັງຍັງຊ່ວຍເຫຼືອເອົາເຂົ້າເກືອແລະຢາຮັກສາພຍາດຕ່າງໆມາໃຫ້ດ້ວຍ . ສນັ້ນເຮົາຫລາຍຄົນຕ້ອງຊື່ສັດຕໍ່ສົມເດັດພຣະເຈົ້າມະຫາຊີວິດແຕ່ງພຣະອາຊະອານາຈັກລາວຮວມທັງຄະນະຣັຖບານຂອງພຣະອົງ ເຮົາຕ້ອງຖືສຸພາສິດວ່າ: ຮວມກັນເຮົາຢູ່ ແຍກກັນເຮົາຕາຍ ແມ່ນເປັນຈິງດັ່ງນີ້ແທ້ . ພໍ່ເຮົາຊາວລົດຮວມທັງພວກ ອາເດເຊແລະຊາວບ້ານທັງຫລາຍບໍ່ແມ່ນທະຫານປະຈຳການແຕ່ເຮົາມີອາວຸດປ້ອງກັນຕົວໝູ່ບ້ານແລະປະຊາຊົນຂອງເຮົາເຮັດແນວນີ້ຣຽກວ່າໜ່ວຍກອງໂຈຣ ຫລາຍສິ່ງຫລາຍຢ່າງທີ່ເຮົາມີເຮົາໃຊ້ກໍຄືກັນກັບກອງທະຫານ ແຕ່ວ່າການປະຕິບັດຂອງເຮົາທຳແບບໜ່ວຍກອງໂຈຣພໍ່ເຮົາຕັ້ງຢູ່ຕາມບ່ອນຕ່າງໆຊຶ່ງເຮົາຮູ້ຈັກໜ້າດິນດີທີ່ສຸດແລະເຮົາຫາງບ່ອນຢູ່ຂອງເຮົາ ພວກເຮົາຊາວລົດມີໜ້າທີ່ສຳຄັນທີ່ຈະຕ້ອງຮັບຜິດຊອບໃນການນຳຊີວິດ

ອ່ານຕໍ່ໜ້າ ໖

(ຕໍ່ຈາກໜ້າ ໑ )

ໃດ ໃຫ້ອາວປະຊາຊົນເຮົາຈະທຳຫຍັງທີ່ລະຫວ່າງໄດ້ວ່າປະຊາຊົນຈະປະຕິບັດຕາມຄຳແນະນຳຂອງເຮົາ ສນັ້ນເຮົາຕ້ອງທຳເປັນຕົວຢ່າງໃຫ້ເຂົາເຫັນແລະເຮົາຈະຕ້ອງເຄົາລົບເຊື່ອຟັງຕົວໜ້າທັງສອງຂອງເຮົາຄື ທ່ານພຍາຕູບີ ລີຟູ້ງແລະທ່ານ ພ ອ ວາງປາວ ຮອມທັງຜູ້ຮອງຊ່ອງທ່ານທັງສອງທີ່ໄດ້ກ່າວມານັ້ນແລ້ວ.

ເມື່ອພວກຄອມມູນິສໄດ້ໂຄສນາວ່າຈະທຳການ (ປົດປ່ອຍ) ປະຊາຊົນຂອງເຮົາ ມັນມີຄວາມໝາຍແນວໃດທີ່ໂຄສນາແນວນີ້ຄຳວ່າ (ປົດປ່ອຍ) ພວກຄອມມູນິສໝາຍຄວາມວ່າພວກເຂົາຈະເປັນຜູ້ສັ່ງໃຫ້ເຮົາເຮັດ ບໍ່ແມ່ນເຮົາຈະເຮັດຕາມຄວາມຕ້ອງການຂອງເຮົາ ໃດ້ເອງເຮົາຈະຕ້ອງຕໍ່ສູ້ກັບພວກຄອມມູນິສແລະສູ້ກັບຄົນອື່ນຈຳນວນຫລາຍທີ່ມາລອກລວງໃຫ້ເຮົາຫລົງຜິດໂດຍເຮົາບໍ່ຍິນຍອມ.

ການຕໍ່ສູ້ກັນດ້ວຍປາກນັ້ນດີກວ່າການຕໍ່ສູ້ການດ້ວຍລູກປືນເພາະເຫດນີ້ຄົນຊັ້ນຕົວໜ້າຂອງຝ່າຍເຮົາຈຶ່ງພຍາຍາມທຳຄວາມຕົກລົງກັບຝ່າຍຄອມມູນິສເພື່ອນຳຄວາມສງົບສຸຂມາສູ່ບ້ານເມືອງ ຖ້າຫາກຝ່າຍຄອມມູນິສຈະເຄົາລົບສິດຂອງພວກເຮົາໃນໝູ່ບ້ານຕ່າງໆ ເຄົາລົບຄົນຂອງເຮົາແລະພື້ນແຜ່ນດິນຂອງເຮົາຫລືຫາກຝ່າຍຄອມມູນິສຫວັງໃນຄວາມສງົບຢ່າງແທ້ຈິງແລ້ວ ກໍຈະທຳໃຫ້ສຳເຣັດບໍ່ຍາກໝັກແຕ່ຝ່າຍຄອມມູນິສບໍ່ຮັກສາຄວາມສູຂຂອງມັນແລ້ວຍັງດື້ດຶງທຳການຕໍ່ສູ້ກັບຝ່າຍເຮົາດ້ວຍລູກປືນຕໍ່ໄປ ເຮົາກໍຈະຕໍ່ສູ້ມັນດ້ວຍລູກປືນຄືກັນ.

ຕໍ່ໄປນີ້ເປັນຄວາມຮູ້ທົ່ວໄປຊຶ່ງພວກເຮົາຊາວລາວຈະຕ້ອງຮູ້ແລະບໍ່ລືມເພື່ອນຳໄປໃຊ້ໃນການທຳງານໃນອານາຄົດ.

<u>ການຕຽມການໃນເວລາສຸກເສີນ.</u>

ອັນຕຣາຍຈະເກີດຂື້ນຫາກວ່າໝູ່ບ້ານຂອງທ່ານຖືກສັດຕຣູເຂົ້າໂຈມຕີແລະທ່ານຈະຕ້ອງອົບພະຍົບເຂົ້າໄປຢູ່ໃນປ່າເພື່ອຈັດກຳລັງຄອຍລັດທາງຍິງສັດຕຣູຫລືໂຈມຕີເພື່ອເອົາໝູ່ບ້ານຄືນມາ ທ່ານຕ້ອງການລູກປືນ ເຂົ້າ ເກືອແມ່ນບໍ່ ? ສະນັ້ນທ່ານຕ້ອງຄິດວ່າທ່ານໄດ້ຕຽມຫາທີ່ຊ່ອນເຄື່ອງຂອງທີ່ຈຳເປັນສຳຫລັບໃຊ້ໃນເວລາສຸກເສີນໄວ້ແລ້ວຫລື ທ່ານໄດ້ຊຸ້ມລູກປືນໄວ້ພໍແລ້ວຫລື ເຂົ້າ ເກືອແລະຢາຕ່າງໆສຳຫລັບທະຫານແລະປະຊາຊົນທີ່ຈະທຳການຕໍ່ສູ້ເພື່ອຍຶດເອົາໝູ່ບ້ານຂອງທ່ານຄືນມາຈາກສັດຕຣູ ທ່ານໄດ້ຕຽມສອນເອົາໄວ້ພໍແລ້ວຫລື?

ປັຈຈຸບັນນີ້ຣະດູຝົນມາຮອດແລ້ວອາກາສບໍ່ດີປານໃດການຖີ້ມເຄື່ອງຕ່າງໆທຳໃຫ້ລຳບາກຫລາຍ ຖ້າຫາກເຮົາບໍ່ສາມາດຖີ້ມເຄື່ອງຕ່າງໆລົງໄປໃຫ້ທ່ານເປັນເວລາສອງສາມອາທິດແລ້ວອັນໃດຈະເກີດຂື້ນ ? ທ່ານໄດ້ຕຽມກະສຸນປືນເຂົ້າເກືອແລະຢາເກັບສຳຮອງໄວ້ພໍທີ່ຈະຈ່າຍໃຫ້ຄົນຂອງທ່ານສຳຫລັບໃຊ້ໃນຣະຍະສອງສາມອາທິດແລ້ວຫລື ? ຖ້າຫາກທ່ານຍັງບໍ່ໄດ້ເລືອກບ່ອນທີ່ປອດໄພໃນປ່າໄວ້ສຳຫລັບເກັບຊ່ອນເຄື່ອງຂອງເພື່ອເອົາມາໃຊ້ໃນເວລາສຸກເສີນແລະຍັງບໍ່ມີການທຳບັນຊີລາຍການສິ່ງຂອງທີ່ຈະຕ້ອງໃຊ້ໃນເວລາສຸກເສີນແລ້ວ ທ່ານຈະຕ້ອງຄິດທຳເສັຽແຕ່ດຽວນີ້ກ່ອນທີ່ຈະສາຍເກີນໄປ.

<u>ຢາຮັກສາໂຣຄ.</u>

ເຈົ້າໜ້າທີ່ຝ່າຍພຍາບານໄດ້ຮັບການຝຶກອົບຮົມໃຫ້ມີວິຊາຄວາມຮູ້ໂດຍໄວເທົ່າທີ່ຈະທຳໄດ້ ເພື່ອໄປໃຫ້ຄວາມຊ່ວຍເຫລືອປະຊາຊົນຕ່າງໆໃນໝູ່ບ້ານຂອງພວກທ່ານ ເພື່ອປ້ອງກັນການເຈັບປ່ວຍປັຈຈຸບັນນີ້ເຮົາຍັງມີພຍາບານຫລືນາຍໝໍ່ ບໍ່ພຽງພໍທີ່ຈະສົ່ງໄປຢູ່ນຳທຸກບ່ອນ ສນັ້ນຈຶ່ງເປັນໜ້າທີ່ສຳຄັນຂອງພວກເຮົາຊາວລາວທຸກຄົນທີ່ຈະຕ້ອງສອນໃຫ້ປະຊາຊົນທຸກຄົນເຂົ້າໃຈແລະຮູ້ຈັກການລະວັງປ້ອງກັນການເຈັບປ່ວຍແລະເຊື້ອໂຣຄທີ່ຈະທຳໃຫ້ເຮົາເຈັບປ່ວຍ ຜູ້ທີ່ເຈັບປ່ວຍຈະເປັນນັກຮົບທີ່ດີບໍ່ໄດ້.

ຄວາມສອາດແລະການອະນາໄມທີ່ດີເປັນສິ່ງສຳຄັນທີ່ສຸດໃນການປ້ອງກັນບໍ່ໃຫ້ເຈັບປ່ວຍ ເຊື້ອໂຣຄຕ່າງໆນັ້ນນຳຄວາມເຈັບປ່ວຍມາສູ່ຄົນຊຶ່ງມັນມັກອາສັຍຢູ່ບ່ອນທີ່ສົກກະປົກຫລືບໍ່ມີຄວາມສອາດພໍ.

ນ້ຳທີ່ໃຊ້ກິນຖ້າບໍ່ສອາດຈະທຳໃຫ້ເກີດເຈັບປ່ວຍໃນທ້ອງໄດ້ຫລາຍແນວຊຶ່ງໂຣຄລົງທ້ອງປວດທ້ອງ ຖ້າຫາກວ່າຄົນຂອງທ່ານຈຳນວນຫລາຍເປັນໂຣຄແນວນີ້ແມ່ນເປັນເພາະນ້ຳບໍ່ສອາດ ທ່ານຄວນຕົ້ມນ້ຳໃຫ້ຫລືເອົານ້ຳນັ້ນມາຕົ້ມເສັຽກ່ອນ ຖ້າຫາກມີຢາຂ້າເຊື້ອໂຣຄໃຫ້ເອົາລົງໄປໃນທ່ານ້ຳກໍໄດ້ ຢາຂ້າເຊື້ອໂຣຄທີ່ຮຽກວ່າ (ໄອ ໂອ ໄດ) ມີປະໂຍດຫລາຍແນວ ເພາະຢານີ້ຂ້າເຊື້ອໂຣຄແລ້ວຍັງປ້ອງການໂຣຄຄໍແໜງຄົນທີ່ເປັນໂຣຄຄໍແໜງນີ້ຖ້າເປັນຫລາຍຈະທຳໃຫ້ກຳລັງຮ່າງກາຍອ່ອນແອລົງ ຄົນທີ່ເປັນໂຣຄຄໍແໜງນັ້ນເນື່ອງມາຈາກການຂາດ (ໄອ ໂອ ໄດ) ເມື່ອເຮົາເອົາ (ໄອ ໂອ ໄດ) ໃສ່ລົງໄປໃນນ້ຳເພື່ອຂ້າເຊື້ອໂຣຄປ້ອງການການເຈັບປ່ວຍໃນທ້ອງ ຢານີ້ຍັງປ້ອງກັນໂຣຄຄໍແໜງໄດ້ອີກດ້ວຍ.

ໃນໜັງສືພິມສບັບນີ້ໄດ້ມີສາຍຊື່ຢາຮັກສາໂຣຄຕ່າງໆຂຽນລົງໄວ້ດ້ວຍ ນາຍໝໍປະຈຳເຂດຂອງທ່ານຈະຂໍເບີກມາທາງກອງບັນຊາການໄດ້ຕາມຄວາມຕ້ອງການ ຖ້າທ່ານຕ້ອງການຂໍເບີກຢາຮັກສາໂຣຄໃຫ້ທ່ານຂຽນຊື່ຢາເປັນໝາຍເລຂຕາມທີ່ມີຢູ່ໃນບັນຊີລາຍຊື່ຢາແລ້ວບອກວ່າຕ້ອງການຈຳນວນເທົ່າໃດ ແລ້ວເອົາໃບເບີກນັ້ນໃສ່ຊອງສົ່ງໄປຍັງກອງບັນຊາການ.

-----///-----

ຫາກວ່າບໍ່ມີພຍາບາລຫລືນາຍໝໍປະຈຳເຂດ ພວກສິດຈະຊ່ວຍປະຊາຊົນໄດ້ຫລາຍດ້ວຍການລາຍງານມາຍັງກອງບັນຊາການໃນການເຈັບປ່ວຍຂອງປະຊາຊົນວ່າຈຳນວນຄົນປ່ວຍມີເທົ່າໃດ ທ່ານບໍ່ຕ້ອງຮູ້ຄວາມກ່ຽວກັບຢາຮັກສາໂຣຄ ຂໍໃຫ້ທ່ານປະຕິບັດຕາມວິທີງ່າຍໆດັ່ງຕໍ່ໄປນີ້ ຄື:

໑ : ປະຊາຊົນເຈັບປ່ວຍດ້ວຍໂຣຄຫຍັງ ? ຖ້າລາຍງານມາຍັງອົງການຈັນທົນໂດຍຂຽນວ່າ : (ຂໍໃຫ້ຈັດຢາຮັກສາໂຣກໄປໃຫ້ເພາະປະຊາຊົນຈຳນວນມາກເປັນເຈັບໄຂ້ຫລາຍ ) ດັ່ງນີ້ທາງອົງການຈັນທົນບໍ່ສາມາດຊ່ວຍອັນໃດໄດ້ເລີຍເພາະບໍ່ຮູ້ວ່າປະຊາຊົນເຈັບທ້ອງ, ເຈັບໜ້າເອິກ, ເຈັບຫົວ, ທີ່ການຫລືທີ່ຂໍ້ຂອງກະດູກ ຈຶ່ງເປັນຈະຕ້ອງລາຍງານມາໃຫ້ທາງອົງການຈັນທົນຊາບຢ່າງນ້ອຍເປັນໂຣກຫຍັງກ່ອນເຮົາຈຶ່ງຈະສາມາດສົ່ງຢາໄປໃຫ້ໂດຍຖືກຕ້ອງ

໒ : ເຊັ່ນດຽວກັນຈະຕ້ອງລາຍງານວ່າມີປະຊາຊົນຈຳນວນເທົ່າໃດເປັນເຈັບໃຫ້ລາຍງານຈຳນວນຄົນເຈັບທີ່ແນ່ນອນເຂົ້າມາໃຫ້ຊາບ ຖ້າລາຍງານແຕ່ພຽງວ່າ : ຈຳນວນນ້ອຍ(ຫລືຈຳນວນຫລາຍ) ເຮົາກໍບໍ່ສາມາດຊ່ວຍເຫລືອໄດ້ຫວຸດຖືງກັນ ເພາະເຮົາບໍ່ຮູ້ຈຳນວນຄົນເຈັບແທ້ຈິງວ່າມີເທົ່າໃດ .

ມີຫລາຍເທື່ອແລ້ວທີ່ສົ່ງໃບເບີກເວສພັນເຂົ້າມາຂໍເບີກຢາ ເມື່ອບໍ່ມີເວສພັນຢ່າງໃດເຫລືອຢູ່ແລ້ວ ຊຶ່ງການປະຕິບັດຢ່າງນີ້ບໍ່ເປັນການດີແນ່ ດັ່ງນັ້ນຂໍໃຫ້ສົ່ງໃບເບີກເຂົ້າມາກ່ອນທີ່ເວສພັນຈະໝົດໄປທຸກເທື່ອ ຖ້າປະຕິບັດເຊັ່ນນີ້ທ່ານຈະມີເວສພັນພໍພຽງທີ່ຈະໃຊ້ໃນເວລາສຸກເສີນ ແລະຈຳໄວ້ວ່າຈະຕ້ອງເອົາເວສພັນທີ່ມີຄວາມຈຳເປັນໄປເກັບສຳລອງໄວ້ໃນທີ່ໆປລອດໄພໃຫ້ຫ່າງໄກອອກຈາກໝູ່ບ້ານທັ້ງນີ້ເພື່ອວ່າເມື່ອຈຳເປັນຈະຕ້ອງຖອນຕົວເມື່ອຂ້າເສິກເຂົ້າໂຈມຕີບໍ່ສາມາດຂົນເວສພັນໄປດ້ວຍໄດ້ສັນັ້ນຈະໄດ້ມີເວສພັນສຳຫລັບຕຽມໄວ້ . ຈຳໄວ້ວ່າຈຳເປັນຢ່າງມາກທີ່ຈະຕ້ອງລາຍງານໃຫ້ທາງອົງການຈັນທົນຊາບເມື່ອຂໍເບີກເວສພັນມາແຕ່ລະເທື່ອ ມີຜູ້ທີ່ຈະໃຫ້ການຮັກສາພຍາບາລຈຳນວນເທົ່າໃດ ?

ແຕ່ຖ້າໃນເຂດພື້ນທີ່ນັ້ນມີໝໍຢູ່ປະຈຳປະຕິບັດງານ ເວສພັນທຸກຊນິດຄວນຈະໄດ້ແຈກຈ່າຍໃຫ້ແກ່ປະຊາຊົນໂດຍຜ່ານການພິຈາຣະນາຂອງໝໍ ພວກເຮົາຊາວ ສິດຄວນຈະພຍາຍາມໃຫ້ຄວາມຊ່ວຍເຫລືອເທົ່າທີ່ຈະ ທຳໄດ້ .

ໃນທຸກໆເຂດທີ່ມີພວກສິດປະຕິບັດງານຢູ່ ບໍ່ວ່າຈະມີໝໍປະຈຳຢູ່ຫລືບໍ່ກໍຄວນຈະມີໂຮງພຍາບາລໃນທີ່ນັ້ນ ໂຮງພຍາບາລນີ້ຄວນຈະຮັກສາໃຫ້ສະອາດຄວນຢູ່ໃນທີ່ແຫ້ງ ມີເວສພັນຕ່າງໆໄວ້ຮັກສາຜູ້ເຈັບປ່ວຍ ແລະຄວນຈະມີຕຽງສຳຫລັບຜູ້ເຈັບປ່ວຍແລະບາດເຈັບທີ່ມາຂໍການຮັກສາ .

ຖ້າຫາກບໍ່ມີພຍາບາລຫລືນາຍໝໍປະຈຳຢູ່ໃນພື້ນທີ່ນັ້ນແລະມີຄົນປ່ວຍທັ້ງບາດເຈັບມາກ ພວກສິດແຕ່ລະຄົນຈະທຳການຊ່ວຍເຫລືອໄດ້ມາກທີ່ສຸດ ຄືຊ່ວຍຈ່າຍຢາຊຶ່ງທາງອົງການຈັນທົນສົ່ງໄປໃຫ້ແກ່ຜູ້ທີ່ເຈັບປ່ວຍຫລືບາດເຈັບທີ່ສຳຄັນ ຄືການອ່ານວິທີໃຊ້ເວສພັນຢ່າງຣະມັດຣະວັງແລະໃຫ້ຖືກຕ້ອງກັບການເຈັບປ່ວຍນັ້ນ ເພາະຖ້າໃຫ້ຢາຜິດແກ່ຄົນເຈັບອັນຕະລາຍອາດຈະທຳໃຫ້ອາການປ່ວຍສູດໜັກລົງໄດ້ ຖ້າເປັນຜູ້ທີ່ໄດ້ຮັບບາດເຈັບສິ່ງສຳຄັນທີ່ສຸດທີ່ຈະກະທຳໂດຍເອກີຄື ຫ້າມເລືອດໃຫ້ຢຸດແລະໃຊ້ຜ້າສະອາດປິດບາດແຜນັ້ນໄວ້ .

__ຄຳເຕືອນ__ ການນຳເວສພັນໄປຂາຍແກ່ປະຊາຊົນເປັນການກະທຳຜິດຢ່າງຮ້າຍແຮງ ສະນັ້ນຂໍຢ່າໄດ້ປະຕິບັດເຊັ່ນນີ້ .

__ສຳຫລັບພວກຊາວ ແອສຈີຢູທັ້ງຫລາຍ__

ໄດ້ມີໜ່ວຍຈັດຕັ້ງຂຶ້ນໃໝ່ເປັນໜ່ວຍທີ່ມີຄວາມສຳຄັນມາກ ສົ່ງໄປປະຕິບັດງານໃນພື້ນທີ່ຕ່າງໆແຫ່ງ ແລະໃນບໍ່ຊ້າຈະສົ່ງໄປປະຕິບັດງານແຫ່ງອື່ນອີກຫລາຍບ່ອນດ້ວຍກັນ ພວກນີ້ຈະທຳໜ້າທີ່ຊຸ່ມໂຈມຕີແລະໂຈມຕີຂ້າເສິກທຸກໂອກາສສຳຫລັບໜ່ວຍພິເສດທີ່ຫາກໍເດີນທາງກັບມາເຖິງ ເຮົາຂໍໃຫ້ການຕ້ອນຮັບຢ່າງອົບອຸ່ນແກ່ທ່ານທັ້ງຫລາຍຊຶ່ງເປັນພວກທີ່ເຮົາຕ້ອງການໄດ້ມາເພີ່ມເປັນກຳລັງຂອງຝ່າຍເຮົາ ຫົວໜ້າໜ່ວຍພິເສດນີ້ຄວນຄວນຈະໄດ້ຮັບການຊົມເຊີຍພິເສດທີ່ເຂົາເຫລົ່ານັ້ນໄດ້ທຳການຝຶກໂອບລົມດ້ວຍຄວາມຕັ້ງອົກຕັ້ງໃຈມີຫລາຍສິ່ງຫລາຍຢ່າງທີ່ຫວັງວ່າຈະໄດ້ເຫັນການປະຕິບັດງານຂອງເຂົາເຫລົ່ານັ້ນ ຂໍໃຫ້ການຕ້ອນຮັບໃນການເດີນທາງກັບມາເທື່ອນີ້ .

ຫົວໜ້າໜ່ວຍພິເສດເຫລົ່ານີ້ມີໜ້າທີ່ອັນສຳຄັນຈະຕ້ອງປະຕິບັດແລະຈະຕ້ອງຮັບຜິດຊອບໃນເຣື່ອງເງິນເດືອນຂອງລູກນ້ອງຂອງຕົນເພາະເງິນເດືອນຈະສົ່ງໃຫ້ຫົວໜ້າໜ່ວຍຊຶ່ງຈະຕ້ອງຈັດໃຫ້ລູກນ້ອງຂອງຕົນໄດ້ຮັບຕາມຈຳນວນທີ່ເຂົາໄດ້ຮັບອານຸມັດ .

ເພື່ອໃຫ້ດຳເນີນໄປໄດ້ຢ່າງຮາບຮື່ນປາສະຈາກອຸປສັກຄວາມສຳຄັນໃນເຣື່ອງນັ້ນຄືພວກຊາວສິດ

...////....

( ອ່ານຕໍ່ໜ້າ ໔ )

ທັງຫລາຍຈະຕ້ອງທຳງານຢ່າງໃກ້ຊິດກັບໜ່ວຍພິເສດນີ້ .

<u>ຄ້າງ ທີ່ພັກຂອງພວກ ແອສຈີຢູ ແລະຂອງພວກລິດ</u>

ເປັນສິ່ງສຳຄັນມາກຂອງພວກລິດແລະ ແອສຈີຢູທັງຫລາຍທີ່ປະຕິບັດຂື້ນນຶ່ງແຫ່ງເພື່ອໄດ້ອາໄສຢູ່ ໃນພື້ນທີ່ດຽວກັນ ຈັດສ້າງຄ້າງທີ່ພັກທີ່ດີແລະສະອາດເພື່ອໃຫ້ພວກຂອງຕົນແລະຄອບຄົວໄດ້ຢູ່ອາໄສ ພວກລິດຈະສະແດງໃຫ້ເຫັນເປັນຕົວຢ່າງແກ່ປະຊາຊົນວ່າຈະຢູ່ໃຫ້ມີຄວາມສຸຂດ້ວຍວິທີໃດ ເປັນການສ້າງເສີມກຳລັງໃຈແລະຄວາມຕັ້ງໃຈໃນການຣົບ .

ແຕ່ລະຄ້າງຂອງພວກລິດແລະ ແອສຈີຢູຄວນຈະມີສິ່ງຕ່າງໆດັ່ງຕໍ່ໄປນີ້ຢູ່ໃນຄ້າງ :

໑ : ທີ່ພັກຫລັງນຶ່ງສຳຫລັບເຈົ້າໜ້າທີ່ຂອງໜ່ວຍລິດແລະແອສຈີຢູຢູ່ຮ່ວມກັນເປັນສິ່ງສຳຄັນຍິ່ງສຳຫລັບທຸກຄົນຈະຕ້ອງຢູ່ຮ່ວມໃນທີ່ພັກແຫ່ງດຽວກັນ ລູກເມັຽແລະຄອບຄົວນັ້ນຢູ່ແຍກກັນໄປຕ່າງຫາກໃກ້ໆ ກັບທີ່ພັກໄດ້ ເຄື່ອງຮັບສົ່ງວິທະຍຸຂອງໜ່ວຍລິດຄວນຈະຕ້ອງເກັບຢູ່ໃນທີ່ພັກຂອງຕົນທີ່ເໝາະສົມແລະ ປລອດໄພຍ ຊຶ່ງຄວນເປັນທີ່ແຫ້ງແລະສະອາດ .

໒ : ສະຖານທີ່ທຳຄົວແລະປະກອບອາຫານຫລັງນຶ່ງ ຊຶ່ງທຸກຄົນຈະຮັບທານອາຫານແລະ ຄວນຈະມີທີ່ສຳຫລັບເກັບອາຫານໄວ້ໄດ້ຢ່າງສະອາດແລະປລອດໄພຍ .

໓ : ສະຖານທີ່ພຍາບານ ຊຶ່ງຈະເກັບເວສພັນໄດ້ປລອດໄພຍແລະເປັນທີ່ແຫ້ງ,ກ້ວາງຂວາງ ພໍທີ່ຈະຕັ້ງຕຽງຮັກສາຄົນເຈັບໄດ້ພໍສົມຄວນ .

໔ : ສະຖານທີ່ເກັບກຣະສຸນປືນແລະເຄື່ອງມືເຄື່ອງໃຊ້ຄວນເປັນທີ່ແຫ້ງແລະປລອດໄພຍ .

໕ : ສະຖານທີ່ສຳຫລັບການປະຊຸມ ຄວນເປັນທີ່ກ້ວາງຂວາງພໍທີ່ຜູ້ບັງຄັບເຂດແລະຫົວໜ້າໜ່ວຍຕ່າງໆອາຈຈະໃຊ້ເປັນທີ່ພິຈາຣະນາແຜນການແລະຣຽກການປະຊຸມກັນໄດ້ .

໖ : ສະຖານທີ່ໃຊ້ເພື່ອສຸຂາພິບາລ ຊຶ່ງເປັນເຣື່ອງສຳຄັນມາກເພື່ອທຳໃຫ້ຄວາມສະອາດມີຂື້ນໃນຄ້າງແລະເພື່ອທຳເປັນຕົວຢ່າງແກ່ປະຊາຊົນ ສະຖານສຸຂາ ນີ້ຄວນຈະຢູ່ຫ່າງຈາກສະຖານທີ່ຕ່າງໆແຫ່ງລະ ໕໐ ແມດ

ກ : ຄວນຈະຈັດຫາພາຊນະໄວ້ໃສ່ເສດອາຫານທີ່ເຫລືອແລະສິ່ງເປື້ອນເປິ້ທັງຫລາຍ ພາຊນະນີ້ຄວນຕັ້ງຢູ່ໃຫ້ຫ່າງໄກອອກໄປຈາກຄົວ ເພຣາະວ່າແມງວັນແລະແມງຕ່າງໆອາດນຳພາເຊື້ອໂຣຄຈາກພາຊນະນີ້ມາສູ່ອາຫານທີ່ຈະຮັບປະທານໄດ້ ຄວນຈະປ້ອງກັນດ້ວຍການທຳຝາປິດເສັຽດ້ວຍ.

ຂ : ຮັກສາບໍຣິເວັນທັງໃນທີ່ພັກແລະຮອບໆ ຄ້າງທີ່ພັກໃຫ້ສອາດສເມີ.

<u>ການຕິດຕໍ່ສື່ສານ</u>

ມັນເປັນສິ່ງສຳຄັນຂອງພວກລິດແລະ ແອສຈີຢູ ທຸກໆຄົນ ຈະຕ້ອງຮູ້ວ່າຄວນຈະປະຕິບັດ ຢ່າງໃດ ເມື່ອວິທະຍຸຮັບສົ່ງທີ່ມີຢູ່ບໍ່ທຳງານ ຈະຕ້ອງກະໄວ້ວ່າເປັນເຣື່ອງສຳຄັນເມື່ອເກີດປັນຫາກ່ຽວກັບ ຣະບົບການຕິດຕໍ່ສື່ສານ ແລະພນັກງານວິທະຍຸນັ້ນມີຄວາມສຳຄັນພຽງໃດຈະຕ້ອງຮັບຊາບໄວ້.

<u>ຄວນຈະປະຕິບັດຢ່າງໃດໃນເມື່ອເຄື່ອງຮັບສົ່ງວິທະຍຸຂັດຂ້ອງບໍ່ທຳງານ</u>

໑ : ຖ້າຫາກເຄື່ອງຮັບຂັດຂ້ອງບໍ່ທຳງານ ໃຫ້ສົ່ງລາຍງານອະທິບາຍການຂັດຂ້ອງຂອງ ເຄື່ອງຮັບມາໃຫ້ຊາບໂດຍດ່ວນ.

ຖ້າຫາກສົ່ງລາຍງານມາບໍ່ໄດ້ໃຫ້ປະຕິບັດດັ່ງນີ້

໑/ ພຍາຍາມຕຣວດດູ ວ່າສ່ວນໃດຂອງເຄື່ອງວິທະຍຸບໍ່ທຳງານ

໒/ ພຍາຍາມແຈ້ງໃຫ້ກອງບັນຊາການຊາບໂດຍປະຕິບັດຕາມວິທີການດັ່ງຕໍ່ໄປນີ້

ກ/ໃຫ້ສົ່ງຄົນນຳສານ ເດີນທາງໄປຍັງສຖານີວິທະຍຸແຫ່ງທີ່ຕັ້ງຢູ່ໃກ້ທີ່ສຸດ ພ້ອມກັບລາຍງານແຈ້ງການຂັດຂ້ອງຂອງວິທະຍຸແລະຕ້ອງສົ່ງຂ່າວມາທາງກອງບັນຊາການໂດຍຜ່ານສຖານີວິທະຍຸ ແຫ່ງອື່ນ.

ຂ/ໃຫ້ທຳສັນຍານດ້ວຍຜ້າລົມສີຂາວເພື່ອ ເຄື່ອງໝາຍຮັບຂອງທາງອາກາດເໝາະວ່າ ເຄື່ອງບິນທີ່ບິນຜ່ານຈະໄດ້ແລເຫັນໃຫ້ປະຕິບັດຕາມຄຳແນະນຳຕາມແບບທີ່ໄດ້ສົ່ງມາພ້ອມນີ້.

ຄ/ຖ້າມີເຄື່ອງບິນເລີກໄປລົງໃນເຂດຂອງທ່ານ ໃຫ້ຂຽນລາຍງານໃສ່ຊອງຝາກນັກບິນໃຫ້ນຳມາສເນີກອງບັນຊາການວຽງຈັນທນ ອະທິບາຍການຂັດຂ້ອງຂອງເຄື່ອງວິທະຍຸນັ້ນ.

ຈະຕ້ອງໄມ່ພຍາຍາມແກ້ໄຂເຄື່ອງວິທະຍຸນັ້ນດ້ວຍຕົນເອງ ສ່ວນປະກອບຂອງເຄື່ອງອອກມາເປັນອັນຂາດ ປ່ອຍໃຫ້ເປັນໜ້າທີ່ຂອງທາງວຽງຈັນທນແກ້ໄຂເອງ.

ເພື່ອປ້ອງກັນວິທະຍຸໃຫ້ທຳງານໄດ້ຕລອດໄປປຣະສະຈາກການຂັດຂ້ອງ ຂໍສເນີວິທີງາງໆ

•••••////•••••

ທີ່ຄວນຈຳໄວ້ວ່າເພື່ອປະຕິບັດ ການປົກປັກຮັກສາເຄື່ອງກົນລະດູການໃຊ້ງານແລະຂະນະທີ່ກຳລັງໃຊ້ເຄື່ອງຈັກ ອີກຂະນຸນັ້ນ.

໑ : ເຄື່ອງທຳໄຟ.

ກ/ ມັນແຫ້ງແລະສະອາດດີແລ້ວຫລື ? ເຄື່ອງທຳໄຟທີ່ເປື້ອນເປິແລະປຽກຊື້ນຈະທຳໃຫ້ມັນບໍ່ທຳງານ ເກີດການຂັດຂ້ອງໄດ້.

ຂ/ ຕັ້ງຢູ່ບົນພື້ນທີ່ຮຽບສະເໝີກັນດີແລ້ວຫລື ? ຖ້າຫາກຕັ້ງໄວ້ບົນທີ່ໆລາດອຽງຈະທຳໃຫ້ລົ້ມລົງແຕກຫັກເສັຽຫາຍໄດ້ໂດຍງ່າຍ.

໒ : ທາງເດີນອາກາດແລະໄຟຟ້າ.

ກ/ ຂໍ້ລຽນສາຍໄຟທຸກໆຂໍ້ສະອາດແລະແຫ້ງດີແລ້ວຫລື ?

ຂ/ ການເອົາຫົວນົດຮຽນຕໍ່ກັບແປ້ນແລະຢູ່ໃນທີ່ຂອງມັນດີແລ້ວຫລື ?

ຄ./ສາຍໄຟຕ່າງບໍ່ຂາດແລະພັນກັບແປ້ນແລ້ວຫລື ?

໓ : ເຄື່ອງຮັບແລະເຄື່ອງສົ່ງ.

ກ/ ສ່ວນປະກອບທຸກສິ່ງແຫ້ງແລະສະອາດດີແລ້ວຫລື ?

ຂ/ ເອົາກ້ອນແຮໃສ່ໂດຍຖືກຕ້ອງໃນທີ່ຂອງມັນແລະກົດເຂົ້າທີ່ຂອງມັນແຮງພໍຄວນທັ້ງນີ້ແນ່ໃຈໄດ້ວ່າຈະສັມຜັດກັນດີແລ້ວຫລື ?

ຄ/ ສາຍອາກາດຂອງເຄື່ອງຮັບໃສ່ຖືກທີ່ຂອງມັນບົນເຄື່ອງສົ່ງຫລືເອົາໃສ່ລົງໄປໃນທີ່ສຳຫລັບສາຍອາກາດຂອງເຄື່ອງສົ່ງຊຶ່ງເປັນການປະຕິບັດທີ່ຖືກຕ້ອງດີແລ້ວຫລື ?

໔ : ສາຍອາກາດ.

ກ/ ສາຍອາກາດຂອງເຄື່ອງສົ່ງຢູ່ໃນທີ່ອັນຖືກຕ້ອງແລະຕໍ່ກັນຮຽບຮ້ອຍດີແລ້ວຫລື ?

ຂ/ ມີອັນໃດແຂວນຢູ່ບົນສາຍອາກາດຊຶ່ງບໍ່ຄວນຈະມີຢູ່ບ້າງຫລືເປົ່າ ?

໕ : ການຫາຄື້ນ.

ກ/ເມື່ອຮັບຫາຄື້ນໝຸນຢ່າງຊ້າໆແລະຣະມັດຣະວັງໃຫ້ແນ່ໃຈວ່າປັບໄດ້ຖືກຕ້ອງ ບາງຄັ້ງການສົ່ງຂ່າວມາຮັບໄດ້ສຽງເບົາມາກເພາະວ່າການປັບຄື້ນຜິດໄປເລັກນ້ອຍ.

ຂ/ການເລື່ອນຄື້ນຄວາມຖີ່ເປັນໄປຢ່າງຖືກຕ້ອງແລ້ວຫລື ?

ຢ່າລືມວ່າຄື້ນຂນາດຄວາມຖີ່ ໖ ໗ ແມກກະໄຊເກີ້ຄວນຈະໃຊ້ກັບຄວາມຖີ່ຣະຫວ່າງ ໕ແລະ ກ ສ່ວນຄື້ນຂນາດຄວາມຖີ່ ຂ ແມກກະໄຊເກີ້ຄວນຈະໃຊ້ຣະຫວ່າງ ກ ແລະ ຝ

໗ : ຖ່ານແບດເຕີຣີ.

ກ/ ຈຳໄວ້ວ່າຖ່ານແບດເຕີຣີທີ່ຈ່າຍໃຫ້ໄປນັ້ນມີຄວາມໄວຕໍ່ຄວາມຮ້ອນແລະຄວາມຊື້ນຢ່າງມາກຊຶ່ງຈະທຳໃຫ້ເສື່ອມໄດ້ໂດຍງ່າຍຂໍໃຫ້ຣະວັງຮັກສາໃຫ້ດີ.

ຂ/ ຖ່ານແບດເຕີຣີນີ້ແຕ່ລະກ້ອນຄວນຈະໃຊ້ໄດ້ບໍ່ຕ່ຳກວ່າ ໒໑ ເຖິງ ໓໐ ວັນຢ່າເອົາມັນໄປໃຊ້ໃນເຫດອຢ່າງອື່ນ ນອກຈາກການອັນມີຄວາມຈຳເປັນຮີບດ່ວນກວ່ານັ້ນ.

ຄ/ ຂໍໃຫ້ຮາຍງານ ນຳເບີກແບດເຕີຣີກ້ອນໃໝ່ກ່ອນທີ່ກ້ອນເກົ່າຈະເສື່ອມຄຸນນະພາບ ຊຶ່ງຈະທຳໃຫ້ປັນຫາການຮັກສາຂາດການຕິດຕໍ່ສື່ສານເປັນໄປໂດຍຮາບຮື່ນ.

ວິທີການປະຕິບັດຕໍ່ເຄື່ອງກຳເນີດໄຟຟ້າ

ເຄື່ອງກຳເນີດໄຟຟ້າຂັດຂ້ອງຈະທຳໃຫ້ການຕິດຕໍ່ສື່ສານຂອງເຮົາຂາດໄປ ນີ້ຂໍ້ຄວນຈຳຈຳໄວ້ປະຕິບັດເພື່ອຈະໄດ້ເຄື່ອງກຳເນີດໄຟຟ້າດັ່ງຕໍ່ໄປນີ້ :

໑ : ຢ່າໝຸນເຄື່ອງກຳເນີດໄຟຟ້າເຮັວເກີນໄປ ຄວນຈະໝຸນໄປທັມມະດາໃນຣະຍະ ໕໐ ຫລືຝ໐ຄັ້ງຕໍ່ໜຶ່ງນາທີ, ຖ້າຫາກໝຸນເຮັວໄປກວ່ານີ້ຈະທຳໃຫ້ມີໝຸນຫັກລົງໄດ້.

໒ : ການໝຸນແຕ່ລະຄັ້ງໃຊ້ຄົນດຽວທຳການໝຸນ ງານນີ້ເປັນງານໜັກດັ່ງນັ້ນຈຶ່ງຄວນມີນຶ່ງຫລືສອງຄົນພ້ອມທີ່ຈະທຳການພັດປ່ຽນເມື່ອຜູ້ທີ່ກຳລັງໝຸນຢູ່ເໜື່ອຍອ່ອນ ຖ້າຫາກໃຊ້ຄົນສອງຄົນທຳການໝຸນພ້ອມກັນເຄື່ອງກຳເນີດໄຟຟ້າມັນຈະເສັຽເຮັວ.

໓ : ຜູ້ທີ່ໝຸນເຄື່ອງກຳເນີດໄຟຟ້າຄວນຈະນັ່ງບົນທີ່ນັ່ງໝຸນຕລອດເວລາ ເພາະມີທີ່ນັ່ງນັ້ນທຳໄວ້ເພື່ອສຳຫລັບຄົນນັ່ງໝຸນຂະນະທີ່ກຳລັງທຳງານຕ້ອງນັ່ງເຊັ່ນນີ້ຕລອດໄປ.

........////.....

(ອ່ານຕໍ່ໜ້າ ໖)

໔ ະ ຢ່າລືມວ່າເມື່ອເລີ່ມຕົ້ນພົບຫລືຢຸດການອົບຮົມດ້ວຍວິທີກະສານທັນທີທັນໃດເພື່ອຈະຖ້າທຳເລີ່ມນັ້ນມີພົນຈະຫັກແລະເຄື່ອງປະກອບພາງໃນຈະເສັຽຫາຍໄດ້ຄວນເລີ່ມການອົບຮົມແລະຢຸດການອົບຮົມຊ້າໆ.

ພນັກງານວິທະຍຸຂອງພວກລົດໄດ້ປະຕິບັດຕາມຄຳແນະນຳນີ້ຈະທຳໃຫ້ຄວາມຍຸ້ງຍາກຕ່າງໆທີ່ຈະເກີດຂຶ້ນລົດນ້ອຍລົງແລະຈະທຳໃຫ້ປະຕິບັດງານມີປະສິດທິພາບມາກຍິ່ງຂຶ້ນ ຈະຕ້ອງມີຄວາມອົດທົນຈະບໍ່ມີອາລົມເສັຽເມື່ອທຳການຕິດຕໍ່ກັບສະຖານີກອງບໍ່ໄດ້ ເພາະຫວ່າງສະຖານີກອງກຳລັງຮັບຂ່າວຈາກສະຖານີອື່ນຢູ່ ທັງນີ້ໝາຍຄວາມວ່າພນັກງານວິທະຍຸອື່ນກຳລັງປະຕິບັດການຢູ່ແລະກຳລັງສົ່ງຂ່າວສຳຄັນເຂົ້າມາໃຫ້ກອງບັນຊາການຢູ່ ຈະຕ້ອງໃຊ້ຄວາມພຍາຍາມຕໍ່ໄປເພື່ອລໍຕິດຕໍ່ໃຫ້ໄດ້ທຸກໆອັນເຄື່ອງວິທະຍຸຄວນຈະຢູ່ໃນທີ່ປອດໄພ ສະອາດແລະແຫ້ງຢູ່ສະເໝີນັ້ນອາດຈະເປັນເຄື່ອງຊ່ວຍຊີວິດໃຫ້ຕົວເອງເອງ .

ການລາຍງານ

ພວກລົດຕ່າງໆໄດ້ສົ່ງລາຍງານທີ່ດີເລີດເຂົ້າມາໃຫ້ກອງບັນຊາການຍອມທັງເອກະສານອັນສຳຄັນຂອງຂ້າເສິກທີ່ຍຶດໄດ້ສຳຫລັບພວກທີ່ຍັງບໍ່ໄດ້ສົ່ງລາຍງານປະຈຳເດືອນເຂົ້າມາຂໍໃຫ້ສົ່ງເຂົ້າມາທຸກໂອກາດທີ່ມີຢູ່ ຂ້າງໜ້ານີ້ການເລືອກອັດຕາເງິນເດືອນນັ້ນຢູ່ທີ່ການປະຕິບັດນັ້ນກອງ.

ອາຫານສຳຫລັບພວກລົດ.

ມີຄຳພູດທີ່ໃຊ້ພູດການມານານແລ້ວວ່າ (ຄົນທີ່ຮ້ອງຮຽນມາທີ່ສຸດນັ້ນທຳງານນ້ອຍທີ່ສຸດ) ຊຶ່ງມັນເປັນຄວາມຈິງສຳຫລັບພວກລົດທີ່ທຳງານຢ່າງໜັກທີ່ສຸດມີການຮ້ອງຮຽນນ້ອຍທີ່ສຸດໃນຄນະດຽວກັນບາງພວກໃຊ້ເວລາສ່ວນມາກຄິດແຕ່ເລື່ອງອາຫານການກິນມາກກວ່າຄິດທີ່ຈະທຳງານ. ຢ່າງໃດກໍຕາມຈະໄດ້ຮັບອາຫານເພີ່ມຂຶ້ນ ສຳຫລັບເວລານີ້ຈະໄດ້ຮັບອາຫານໂດຍຈະທຳໃຫ້ທັງໃຫ້ເດືອນລະສາມຄັ້ງແທນທີ່ຈະເປັນສອງຄັ້ງຢ່າງແຕ່ກ່ອນ. ແຕ່ລະຄັ້ງທີ່ໄດ້ຮັບອາຫານຈະຕ້ອງພຍາຍາມແບ່ງໃຫ້ໄດ້ສ່ວນພໍດີກັບໃນຣະຍະເວລາ ໑໐ ວັນແຕ່ຈະຖີ້ມອາຫານໃຫ້ຄັ້ງດຽວພຽງພໍສຳຫລັບກິນໄດ້ຕລອດທັງເດືອນຕໍ່ໄປ ຈຳໄວ້ວ່າອາຫານທີ່ຖີ້ມໃຫ້ນີ້ເພາະພວກລົດແລະແອສຣີຢູຮັບປະທານເທົ່ານັ້ນ ບໍ່ໄດ້ຖີ້ມໃຫ້ສຳຫລັບຄອບຄົວແລະເມັຽຂອງແຕ່ລະຄົນ ທຸກຄົນມີເງິນເດືອນທີ່ຈະໃຫ້ຄອບຄົວແລະເລັ້ຽງຊອງຕົນພຽງພໍແລ້ວ ແຕ່ລະຫີບທີ່ຈະມີບັນຊີສແດງລາຍການແລະຊື່ສແດງວ່າເປັນຂອງໜ່ວຍໃດ ແລະແຕ່ລະຫີບທີ່ໄດ້ທຳການຕຣວດຢ່າງຣະມັດຣະວັງແລ້ວ ສະນັ້ນຂໍຢ່າໂດຮ້າຍງານມາວ່າໂດຮັບສິ່ງຂອງຕາມຮ່າງການ. ໃນເມື່ອເຮົາໄດ ນຳບັນຈຸລົງໄປຢ່າງຣະມັດຣະວັງໂດຍຖືກຕ້ອງແລ້ວ. ພວກລົດທຸກຄົນມີການຢູ່ດີກິນດີກວ່າຄົນອື່ນໆແລະມີຊນະດີກວ່າທະຫານຝ່າຍຂ້າເສິກມາກມາຍນັກຊຶ່ງພວກນັ້ນໄດ້ຮັບແລກເຂົ້າຊຶ່ງມີສີແດງພຽງເລັກນ້ອຍເທົ່ານັ້ນສຳຫລັບເປັນອາຫານສ່ວນທີ່ໃຫ້ ຊຶ່ງຄວນທີ່ຈະຄິດເຖິງແຕ່ງສິ່ງອື່ນທີ່ມີຄວາມສຳຄັນດີກວ່າຈະມາເສັຽເວລາຮ້ອງຮຽນໃນເລື່ອງອາຫານການກິນ

ພວກລົດຊັ້ນໜຶ່ງ–

໑/ ເຮົາມີຄວາມຍິນດີທີ່ຈະປະກາດວ່າພວກລົດດັ່ງຕໍ່ໄປນີ້ໄດ້ຮັບການແຕ່ງຕັ້ງເປັນພວກລົດຊັ້ນທີ່ໜຶ່ງຄື:

໑–ພວກລົດທຸກຄົນທີ່ປະຕິບັດງານຢູ່ວຽງຈັນ.

໒–ຫົວໜ້າທີມລົດທຸກຄົນທີ່ປະຕິບັດງານຢູ່ໃນສນາມ.

໓–ຫົວໜ້າທີມແອສຣີຢູທຸກຄົນທີ່ປະຕິບັດງານຢູ່ໃນສນາມ

໔–ຫົວໜ້າພນັກງານວິທະຍຸ

ຊຶ່ງທຸກຄົນເຫລົ່ານີ້ຈະໄດ້ຮັບເງິນເດືອນ ໆ ລະ ໓.໕໐໐ກີບ.

໒/ ຜູ້ທີ່ຈະເປັນພວກລົດຊັ້ນທີ່ສອງຮັບເງິນເດືອນ ໆ ລະ໓.໐໐໐ກີບ

ກ–ພວກລົດທີ່ເປັນຄູທຸກຄົນຜູ້ທີ່ໄດ້ຜ່ານການກະໂດດລົ່ມແລ້ວແລະພວກທີ່ຍັງບໍ່ໄດ້ກະໂດດລົ່ມແຕ່ວ່າໄດ້ປະຕິບັດໜ້າທີ່ຢ່າງດີເດັ່ນ.

ຂ–ພນັກງານວິທະຍຸຂອງລົດທຸກຄົນ.

໓/ ຜູ້ທີ່ຈະເປັນພວກລົດຊັ້ນທີ່ສາມໄດ້ຮັບເງິນເດືອນ ໆ ລະ ໒.໕໐໐ກີບ. ຜູ້ທີ່ໄດ້ຖືກແຕ່ງຕັ້ງໃຫ້ເປັນພວກລົດຊັ້ນທີ່ສາມນັ້ນບໍ່ໃຊ່ຈະຖືກແຕ່ງຕັ້ງໃຫ້ເປັນຊັ້ນນີ້ຕລອດໄປແຕ່ສແດງໃຫ້ເຫັນວ່າທາງກອງບັນຊາການບໍ່ເຫັນວ່າພວກນີ້ໄດ້ປະຕິບັດໜ້າທີ່ຢ່າງດີທີ່ສຸດຕາມຄວາມສາມາດຂອງຕົນທີ່ມີຢູ່ຊຶ່ງລົດໃຫ້ມາຢູ່ຊັ້ນທີ່ສາມ ແລະຈະຕ້ອງທຳງານໃຫ້ເຫັນສະມັດຕະພາບຂອງຕົນທຸກຄົນເຊັ່ນນີ້ຈະຖືກຖອດໃຫ້ອອກໄປຈາກວົງງານຂອງລົດຕໍ່ໄປກໍໄດ້ຊຶ່ງທາງກອງບັນຊາການຫວັງວ່າຈະບໍ່ມີຜູ້ໃດຖືກລົດລົງມາເປັນພວກລົດຊັ້ນທີ່ສາມ.

ສຸດທ້າຍຫວັງວ່າ ລົດ ແລະ ແອສຣີຢູທຸກຄົນຈະໃສ່ໃຈແລະປະຕິບັດຕາມຄຳເຕືອນ./.

----ຈົບ----